**ມິຊຊາອາທິດທີ 2 ກຳນົດພຣະກຣິສຕະຄົມ**

**ວັນທີ 6 ທັນວາ 2020**



**ພຣະວໍລະສານໂດຍນັກບຸນມັກໂກ 1, 1-8**

ເລີ່ມຕົ້ນພຣະວໍລະສານກ່ຽວເຖິງພຣະເຢຊູກຣິສໂຕພຣະບຸດຂອງພຣະເຈົ້າ. ຕາມທີ່ໄດ້ຂຽນໄວ້ໃນໜັງສືຂອງປະພາສົກອິຊາຢາວ່າ: “ນັ້ນເດ, ເຮົາສົ່ງຜູ້ຖືສານຂອງເຮົາໄປຕຽມທາງໄວ້ລ່ວງໜ້າທ່ານ.ມີສຽງຮ້ອງເຕືອນໃນທີ່ປ່ຽວວ່າ: “ຈົ່ງຈັດຕຽມເສັ້ນທາງຂອງພຣະອົງເຈົ້າໃຫ້ຮາບພຽງ” ຢວງບັບຕິສຕາໄດ້ປາກົດຕົວຢູ່ທີ່ປ່ຽວແລະເທດສະໜາເລື່ອງພິທີລ້າງເຕືອນໃຫ້ເປັນທຸກກັບໃຈ ເພື່ອຈະໄດ້ຮັບການອະໄພໂທດໂຜດບາບ. ທົ່ວແຂວງຢູດາແລະຊາວນະຄອນເຢຣູຊາແລມທັງໝົດພາກັນມາຫາຢວງ ແລະຮັບພິທີລ້າງຈາກທ່ານຢູ່ແມ່ນ້ຳຢໍແດນ, ດ້ວຍສາລະພາບບາບຂອງຕົນ. ຢວງນຸ່ງຫົ່ມດ້ວຍໜັງອູດ, ຮັດແອວດ້ວຍເຊືອກໜັງ, ກິນຕັກແຕນ ແລະນ້ຳເຜີ້ງປ່າເປັນອາຫານ. ທ່ານເທດສະໜາວ່າ: “ຜູ້ມາຕາມຫລັງຂ້າພະເຈົ້າຊົງລິດອຳນາດກວ່າຂ້າພະເຈົ້າ, ຂ້າພະເຈົ້າເອງບໍ່ສົມກົ້ມລົງແກ້ສາຍເກີບຂອງເພິ່ນຊ້ຳ. ຂ້າພະເຈົ້າໄດ້ຊຳລະພວກທ່ານດ້ວຍນ້ຳ, ສ່ວນເພິ່ນຜູ້ນັ້ນຈະຊຳລະລ້າງພວກທ່ານດ້ວຍພຣະຈິດເຈົ້າ”.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມກ 1, 1-8**

ອາທິດທີ່ຜ່ານມາ, ພວກເຮົາໄດ້ກ້າວເຂົ້າສູ່ກຳນົດພຣະກຣິສຕະຄົມພ້ອມກັບວາຈາພຣະເຈົ້າທີ່ເຊື້ອເຊີນພວກເຮົາໃຫ້ຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ. ຍ້ອນພວກເຮົາບໍ່ຮູ້ຈັກວັນແລະເວລາທີ່ພຣະອົງຈະກັບມາອີກຄັ້ງ. ສ່ວນວັນອາທິດທີສອງກຳນົດພຣະກຣິສຕະຄົມນີ້, ວາຈາພຣະເຈົ້າຮຽກເອີ້ນພວກເຮົາໃຫ້ມີຄວາມຫວັງ. ເຖິງວ່າພວກເຮົາຈະຢູ່ໃນສະພາບຊີວິດໃດກໍຕາມ, ເຖິງວ່າພວກເຮົາຈະພົບກັບທາງຕັນໃນຊີວິດກໍຕາມ, ພຣະເຈົ້າກໍຢູ່ກັບພວກເຮົາແລະຊ່ວຍພວກເຮົາສະເໝີ.

ດັ່ງໃນບົດອ່ານທີໜຶ່ງຈາກໜັງສືຂອງປະພາສົກອີຊາຢາກ່າວວ່າ: "ພວກເຈົ້າຈົ່ງບັນເທົາໃຈ! ຈົ່ງບັນເທົາໃຈປະຊາກອນຂອງເຮົາເຖີດ." ເປັນຄຳເວົ້າທີ່ພຣະເຈົ້າກ່າວກັບປະຊາກອນຂອງພຣະອົງເມື່ອຖືກເນລະເທດຢູ່ບາບີລອນ. ພວກເຂົາກຳລັງຢູ່ໃນຄວາມທຸກຍາກລຳບາກ, ຖືກກົດຂີ່ຂົ່ມເຫັງແລະຫ່າງໄກຈາກບ້ານເກີດເມືອງນອນ. ພວກເຂົາຄິດວ່າພຣະເຈົ້າໄດ້ປະຖິ້ມພວກເຂົາ, ພຣະອົງໄດ້ລືມຄຳໝັ້ນສັນຍາທີ່ໄດ້ທຳໄວ້ກັບພວກເຂົາຄືພຣະອົງຈະເປັນພຣະເຈົ້າຂອງພວກເຂົາແລະປົກປັກຮັກສາພວກເຂົາຕະຫລອດໄປ. ສະຫລຸບແລ້ວ, ປະຊາກອນອິສຣາແອນກຳລັງຢູ່ໃນຄວາມສິ້ນຫວັງ. ແຕ່ພຣະເຈົ້າກ່າວທາງປະພາສົກອີຊາຢາວ່າ: ຢ່າຢ້ານກົວແລະສິ້ນຫວັງເລີຍ. ພຣະເຈົ້າບໍ່ໄດ້ປະຖິ້ມປະຊາກອນຂອງພຣະອົງ. ພຣະອົງຈະມາດັ່ງຜູ້ມີອຳນາດເພື່ອປົດປ່ອຍພວກເຂົາ. ດັ່ງນາຍຊຸມພາບານທີ່ຈະມາຕ້ອນໂຮມແລະດູແລຮັກສາຝູງແກະຂອງຕົນ.

ສ່ວນໃນບົດອ່ານທີສອງ, ນັກບຸນເປໂຕກໍກ່າວກັບກຸ່ມກຣິສຕະຊົນຂອງທ່ານວ່າ: ພວກເຈົ້າບໍ່ຕ້ອງກັງວົນແລະສິ້ນຫວັງ. ຍ້ອນພຣະເຢຊູເຈົ້າບໍ່ໄດ້ລືມເລືອນພັນທະສັນຍາທີ່ພຣະອົງໄດ້ກະທຳກັບພວກເຮົາດອກ. ພັນທະສັນຍານີ້ແມ່ນການໄຖ່ກູ້ທີ່ພຣະອົງຈະນຳມາໃຫ້ພວກເຮົາທຸກຄົນ.

ເພື່ອຈະຕ້ອນຮັບການໄຖ່ກູ້ທີ່ມາຈາກພຣະເຢຊູເຈົ້ານັ້ນ, ພວກເຮົາຕ້ອງກະກຽມແລະຈັດຕຽມເສັ້ນທາງຊີວິດຈິດໃຈພວກເຮົາໃຫ້ຮາບພຽງ. ເປັນຄຳເຊື້ອເຊີນຂອງພຣະເຢຊູເຈົ້າໃນພຣະວໍລະສານວັນນີ້. ບ່ອນໃດຍັງເປັນໂນນ, ເປັນຂຸມ, ເປັນອຸປະສັກຕໍ່ການສະເດັດມາຂອງພຣະອົງໃນຊີວິດພວກເຮົາໃຫ້ພວກເຮົາດັດແປງແກ້ໄຂ. ເພື່ອວ່າຄວາມສຳພັນລະຫວ່າງພວກເຮົາກັບພຣະເຈົ້າຈະບໍ່ຖືກຕັດຂາດຍ້ອນໂນນສູງຫລືເຫວເລິກອັນແມ່ນຄວາມຜິດການບາບທີ່ພວກເຮົາໄດ້ກະທຳ.

**ພາວະນາ**

ໂອພຣະເຢຊູເຈົ້າ, ລູກຂໍຂອບພຣະຄຸນພຣະອົງສຳລັບວາຈາແຫ່ງຄວາມຫວັງທີ່ພຣະອົງນຳມາໃຫ້ລູກໃນກຳນົດແຫ່ງການຕຽມຮັບການສະເດັດມາຂອງພຣະອົງນີ້. ໂຜດໃຫ້ລູກເຊື່ອໝັ້ນຢູ່ສະເໝີວ່າພຣະອົງບໍ່ໄດ້ປະຖິ້ມລູກແຕ່ພຣະອົງຢູ່ນຳລູກແລະຮັກແພງລູກສະເໝີ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ